## ຈົ່ງມື້ໄວ້ສັກຢາ

ມັນເປັນສິ່ງສຳຄັນທີ່ຕ້ອງໃຫ້ແນ່ໃຈວ່າໄດ້ຮັບການສັກຢາປ້ອງກັນໂຣກໃຫ້ຖືກຕາມກຳນົດເວລາ ເພື່ອວ່າເດັກທາຣົກຈະໄດ້ຖືກຄຸ້ມກັນແຕ່ຕົ້ນ ແລະ ຈະບໍ່ມີຄວາມສ່ຽງຕໍ່ການຕິດໂຣກທີ່ຮ້າຍແຮງ.




ກວດເບິ່ງ NSW Immunisation Schedule (ຕາຕະລາງ ການສັກຢາປ້ອງກັນໂຣກ ຣັດ NSW) ເພື່ອຊອກ ຮູ້ວ່າການສັກຢາເທື່ອໜ້າຂອງລູກທ່ານ ແມ່ນຕອນໃດ ທີ່: health.nsw.gov.au/vaccinate

## ບັນທຶກສຸຂພາບສ່ວນຕົວຂອງຂ້ອຍ (ປຶ້ມຫົວສີຟ້າ - Blue Book)

ມັນເປັນສິ່ງສຳຄັນທີ່ຕ້ອງນຳເອົາປຶ້ມຫົວສີຟ້າຂອງລູກທ່ານໄປນຳທຸກໆຄັ້ງທີ່ມີນັດໝາຍເພື່ອໃຫ້ນາຍໝໍ / ພະຍາບານບັນທຶກການສັກຢາຂອງລູກທ່ານ.




## ຂໍ້ມູນເພີ້ມຕື່ມ

### ກົມອະນາໄມ ຣັດ ນຊວ

health.nsw.gov.au/immunisation

### ກະຊວງ ສາທາຣະນະສຸກແຫ່ງຣັຖບານອອສເຕຣເລັຍ

health.gov.au/health-topics/immunisation

### MumBubVax

mumbubvax.org.au/Hepatitis-B-vaccine

### ເຈັ້ຍຂໍ້ມູນ ໂຣກຕັບອັກເສບ ຊະນິດ ບີ ຂອງ NSW

health.nsw.gov.au/Infectious/factsheets/Pages/Hepatitis_B.aspx

### ກອງທະບຽນພູມຄຸ້ມກັນ ອອສເຕຣລຽນ

servicesaustralia.gov.au/individuals/services/medicare/australian-immunisation-register

ເດືອນ ກັນຍາ 2021 © NSW Health. SHPN (HP NSW) 210887-15.



NSW Health

# ການສັກຢາປ້ອງກັນໂຣກ ຕັບອັກເສບຊະນິດ ບີ

## ສຳລັບລູກເກີດໃໝ່ຂອງທ່ານ

NSW GOVERNMENT



## ໂຣກຕັບອັກເສບ ຊະນິດ ບີ

ເຊື້ອໄວຣັສໂຣກຕັບອັກເສບຊະນິດບີສາມາດກໍ່ໃຫ້ເກີດໂຣກຕັບແບບຍາວນານດັ່ງເຊັ່ນເປັນໂຣກຕັບແຂງ ແລະ ເປັນໂຣກມະເຮັງ. ເດັກທາຣົກທີ່ໄດ້ຕິດເຊື້ອໂຣກຕັບອັກເສບຊະນິດບີມີທາງທີ່ຈະພັດທະນາກາຍມາເປັນການອັກເສບອັນຮ້າຍແຮງຕລອດຊີວິດໄດ້ເຖິງ90%.

ໂຣກຕັບອັກເສບ ຊະນິດ ບີ ເປັນໂຣກຕິດຕໍ່ອັນຮ້າຍແຮງ ແລະສາມາດແພ່ຜາຍໄດ້ງ່າຍໂດຍຜ່ານ:

- ແມ່ທີ່ມີເຊື້ອໂຣກຜ່ານໄປຫາເດັກໃນຕອນເກີດ
- ຜິວໜັງທີ່ຖືກແທງດ້ວຍສິ່ງທີ່ບໍ່ສະອາດເຊັ່ນເຂັມຫຼືມີດແຖ
- ການສຳຜັດໂດຍກົງລະຫວ່າງເລືອດຂອງຜູ້ມີເຊື້ອໂຣກ ແລະບາດແຜທີ່ເປີດ ເຊັ່ນຮອຍຂູດແລະຮອຍປາດ
- ການມີເພດສຳພັນກັບຜູ້ທີ່ມີເຊື້ອໂຣກ

## ການກວດໃນລະຍະການຖືພາ

ຜູ້ຍິງທຸກໆຄົນຄວນກວດເບິ່ງ ໂຣກຕັບອັກເສບ ຊະນິດ ບີ ໃນລະຍະທີ່ໄປກວດປະຈຳຕອນຖືພາ. ຖ້າວ່າຜົນການກວດເປັນທາງບວກ ເດັກກໍຈະຕ້ອງໄດ້ຮັບການປິ່ນປົວເພື່ອປ້ອງກັນການຕິດເຊື້ອໂຣກແລະຄວາມສ່ຽງໃນການເປັນໂຣກຕັບຊຳເຮື້ອ. ການປິ່ນປົວຍັງອາດຈະຖືກແນະນຳໃຫ້ແກ່ຜູ້ເປັນແມ່ອີກດ້ວຍ.

## ການປ້ອງກັນ

ຢາສັກປ້ອງກັນໂຣກ ຕັບອັກເສບຊະນິດ ບີ ໄດ້ຖືກນຳໃຊ້ຢູ່ໃນອອສເຕຣເລັຍມາຕັ້ງແຕ່ຕົ້ນຊຸມປີ 1980 ແລະ ການສັກຢາປ້ອງກັນໂຣກແມ່ນວິທີທີ່ດີທີ່ສຸດໃນການປ້ອງກັນໂຣກນີ້.

## ຢາສັກປ້ອງກັນໂຣກ ຕັບອັກເສບຊະນິດບີ ສຳລັບເດັກເກີດໃໝ່

ເດັກເກີດໃໝ່ໝົດທຸກໆຄົນໄດ້ຖືກແນະນຳໃຫ້ສັກຢາປ້ອງກັນໂຣກຕັບອັກ ເສບຊະນິດ ບີ ໃນເວລາເກີດ ເພື່ອ:

- ປ້ອງກັນການແພ່ຜາຍຂອງໂຣກຈາກແມ່ທີ່ຕິດເຊື້ອໄປຫາລູກ. ບາງຄັ້ງຜູ້ເປັນແມ່ອາດຈະບໍ່ຮູ້ວ່າຕົນເອງມີໂຣກນີ້; ແລະ
- ປ້ອງກັນການແພ່ຜາຍຂອງໂຣກໃນລະຍະສອງສາມເດືອນຕົ້ນໆຂອງຊີວິດຈາກການຕິດເຊື້ອໂຣກຈາກຜູ້ຄົນທີ່ຢູ່ໃນເຮືອນດຽວກັນ ຫຼື ຈາກຄົນອື່ນໆທີ່ອາດຈະມີເຊື້ອໂຣກນີ້.

## ຕາຕະລາງຂອງການສັກຢາປ້ອງກັນໂຣກ ຕັບອັກເສບຊະນິດ ບີ

ໄດ້ມີການແນະນຳວ່າໃຫ້ລູກຂອງທ່ານໄດ້ຮັບຢາສັກປ້ອງກັນໂຣກຕັບອັກເສບຊະນິດ ບີ ນຶ່ງເຂັມໃນເວລາເກີດ ຫຼື ພາຍໃນເວລາເຈັດມື້ຫຼັງຈາກເກີດ,ຕິດຕາມດ້ວຍອີກສາມເຂັມຂອງຢາສັກປ້ອງກັນໂຣກຕັບອັກເສບຊະນິດ ບີ ນີ້ ຕອນອາຍຸ 6ອາທິດ, 4ເດືອນ ແລະ 6ເດືອນ.

## ຄວາມປອດໄພຂອງຢາສັກປ້ອງກັນໂຣກຕັບອັກເສບຊະນິດ ບີ

ຈາກປະສົບການອັນກວ້າງຂວາງສະແດງໃຫ້ເຫັນວ່າ ຢາສັກປ້ອງກັນໂຣກຕັບອັກເສບຊະນິດບີມີຄວາມປອດໄພ ແລະ ເປັນທີ່ທົນທານໄດ້ດີສຳລັບເດັກທາຣົກເກີດໃໝ່. ອາການຂ້າງຄຽງສາມັນຂອງຢາສັກນີ້ແມ່ນມີໜ້ອຍແລະຮວມມີ ອາການແດງ ແລະໃຄ່ຕາມບ່ອນຮອຍສັກຢາ. ຢາສັກປ້ອງກັນໂຣກຕັບອັກເສບຊະນິດບີບໍ່ແຊກແຊງການໃຫ້ລູກກິນນົມແມ່.

## ການປິ່ນປົວເດັກທາຣົກເກີດໃໝ່ຈາກແມ່ທີ່ມີໂຣກຕັບອັກເສບຊະນິດ ບີ

ນອກຈາກຈະໄດ້ຮັບການສັກຢາປ້ອງກັນໂຣກຕັບອັກເສບຊະນິດບີນຶ່ງເຂັມໃນເວລາເກີດແລ້ວ ເດັກທີ່ເກີດຈາກແມ່ທີ່ມີໂຣກຕັບອັກເສບຊະນິດບີ ກໍຍັງຈະຮັບຢາຮັກສາທີ່ເອີ້ນວ່າ ‘hepatitis B immunoglobulin’ (ພູມຄຸ້ມກັນໂຣກຕັບອັກເສບຊະນິດບີ) ພາຍໃນ 12ຊົ່ວໂມງທີ່ເກີດເພື່ອເພີ້ມການປ້ອງກັນ. ມັນເປັນສິ່ງສຳຄັນໃນການສັກຢາປ້ອງກັນໂຣກຕັບອັກເສບຊະນິດບີໃຫ້ຄົບເພື່ອການປ້ອງກັນອັນຍາວນານ.

## ການກວດເພີ້ມຂອງເດັກທາຣົກທີ່ເກີດຈາກແມ່ທີ່ມີໂຣກຕັບອັກເສບຊະນິດ ບີ

ເດັກທີ່ເກີດຈາກແມ່ທີ່ມີໂຣກຕັບອັກເສບຊະນິດບີຕ້ອງມີການກວດເລືອດ 3 ເດືອນຫຼັງຈາກໄດ້ສັກຢາປ້ອງກັນໂຣກຕັບອັກເສບຊະນິດບີຄົບແລ້ວເພື່ອກວດເບິ່ງວ່າພວກເຂົາໄດ້ຖືກປ້ອງກັນຫຼືບໍ່. ທ່ານ ແລະ ນາຍໝໍຂອງທ່ານຈະໄດ້ຮັບຈົດໝາຍເຕືອນຈາກ ກົມອະນາໄມ ຣັດ NSW.

